# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 16 ມີນາ 2008 ( 03-16-2008 )

---

## ການດຳຣົງຊີວິດ 3:16 ທັງໝົດແມ່ນເຣື່ອງຄວາມຮັກ:

**ຂໍ້ພຣະຄັມພີໃນບົດຮຽນ:** (ໂຢຮັນ 3:16; 1 ໂຢຮັນ 3:17-20; 4:15-18; 5:2-5)

**ຄຳຖາມແຫ່ງຊີວິດ:** ພຣະເຈົ້າມີພຣະປະສົງໃຫ້ຂ້າພະເຈົ້າຮັກຄົນອື່ນ ໆ ຢ່າງໃດ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຮັກທຸກ ໆ ຄົນເພາະນັ້ນເປັນລັກສະນະຂອງພຣະອົງຄື ໃຫ້ຮັກ, ແລະພຣະອົງມີພຣະປະສົງໃຫ້ຄົນທີ່ຮູ້ຈັກພຣະອົງທາງຄວາມເຊື່ອນັ້ນ ສະແດງຄວາມຮັກຕໍ່ຄົນອື່ນຢ່າງເສັຽສລະແທ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ມີຊີວິດປະຈຳວັນດ້ວຍຄວາມໝັ້ນໃຈ ແລະຫວັງວ່າເປັນດັ່ງນີ້ໂດຍ:

- ເຂົ້າໃຈເຖິງຄວາມກ້າຫານ, ສິ່ງທີ່ພຣະເຈົ້າປະທານຄວາມຮັກໃຫ້ຕາມທັມມະຊາດຂອງພຣະເຈົ້າ; ແລະ
- ຮູ້ເຖິງວິທີທາງທີ່ທ່ານມີຄວາມສາມາດສະແດງຄວາມຮັກຄວາມຮັກຕໍ່ຄົນອື່ນຢ່າງເສັຽສລະແທ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:** ໃຫ້ນັກຮຽນປະເມີນຜົນ ແລະອະທິບາຍໃນທາງທີ່ແຕກຕ່າງຂອງຄົນ ແລະຜູ້ຕີຄວາມໝາຍໃນຄວາມຮັກຂອງຄົນໃນສັງຄົມຂອງພວກເຮົາປະຈຸບັນມາໃຫ້ແຈ່ມແຈ້ງ. ໃຫ້ແບ່ງປັນຕົວຢ່າງຂອງການເອົາໃຈ ຫລື ການຮັກຂອງເຂົາທີ່ມີຕໍ່ກັນ.

- ຖາມ: ເປັນຫຍັງບາງຄົນຈຶ່ງຮັກ ແລະຊ່ອຍເຫລືອຜູ້ທີ່ເຂົາເຈົ້າບໍ່ຮູ້ຈັກໄດ້? ເຊັ່ນຕົວຢ່າງ ຜູ້ທີ່ຖືກລົມພະຍຸ, ຫລືພັຍທັມມະຊາດທຳລາຍ, ແຈກຢາຍອາຫານໃຫ້ແກ່ຄົນອຶດຫິວ, ແລະອື່ນ ໆ.

## 1. <u>ພຣະເຈົ້າຊົງຮັກທ່ານ::</u> (ໂຢຮັນ 3:16)

- ຂໍໃຫ້ນັກຮຽນອາສາສມັກອ່ານ ຫລືເລົ່າປາກເປົ່າຕາມຄວາມຈື່ຈຳຂອງເຂົາເຈົ້າໃນ ໂຢຮັນ 3:16.
- ໃຫ້ເຮັດເປັນ 2 ຄໍລັມໃສ່ກະດານ ແລ້ວຂຽນ "**ເຄັ່ງຄັດ**" ໃສ່ຫ້ອງທີນຶ່ງ ແລະ "**ຮັກ**" ໃສ່ຫ້ອງທີສອງ ແລ້ວນຳພານັກຮຽນປຣຶກສາຫາລືເພື່ອໃຫ້ເຫັນຄວາມແຕກຕ່າງຂອງ ເຄັ່ງຄັດ ແລະ ຮັກ. ຊຶ່ງຈະຊີ້ໃຫ້ເຫັນວ່າ ການນັບຖືຢ່າງເຄັ່ງຄັດນັ້ນເປັນການມຸ້ງໝັ້ນໂຈມຕີຈາກຄົນພາຍນອກ,
ໂດຍໃຫ້ຄວາມສະດວກທຸກວິທີທາງຢ່າງຜີວເຜີນ. ແຕ່ຄວາມຮັກອັນຍິ່ງໃຫຍ່ໄດ້ພຸ່ງອອກມາຈາກຄົນຂອງພຣະເຈົ້າ ຊຶ່ງອອກມາຈາກສ່ວນເລິກໃນຫົວໃຈ ຊຶ່ງພວກຖືກົດບັນຍັດຢ່າງເຄັ່ງຄັດບໍ່ສາມາດເຮັດໄດ້.
- ຊີ້ໃຫ້ເຫັນວ່າ "**ຜູ້ດຽວ ແລະພຣະບຸດອົງດຽວເທົ່ານັ້ນ**" ໝາຍເຖິງພຣະເຢຊູຄຣິດທີ່ພຣະເຈົ້າໄດ້ຊົງສົ່ງລົງມາ. ພຣະເຈົ້າຊົງໃຫ້ພຣະເຢຊູຄຣິດເຈົ້າຊົງເປັນຜູ້ປະທານຊີວິດນິຣັນໃຫ້ແກ່ຜູ້ທີ່ເຊື່ອໄວ້ວາງໃຈ ແລະຮັກພຣະອົງ.
- ສິ່ງທີ່ສຳຄັນກໍຄືໃຫ້ເຂົ້າໃຈໃນຄວາມຮັກຂອງພຣະເຈົ້າ. ຊຶ່ງໂຢຮັນ 3:16 ໄດ້ບອກພວກເຮົາເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າທີ່ມີຕໍ່ໂລກ, ໃນເມື່ອພວກເຮົາສັງເກດເບິ່ງແລ້ວຮູ້ວ່າຄວາມຮັກຂອງພຣະເຈົ້າມີຄວາມແຕກຕ່າງກັບຄວາມຮັກຂອງສາສນາອື່ນ ໆ ຄື (ພຣະອົງໄດ້ຊົງປະທານພຣະບຸດອົງດຽວຂອງພຣະອົງ) ເພື່ອທຸກຄົນທີ່ເຊື່ອໄວ້ວາງໃຈໃນພຣະອົງກໍຈະມີຊີວິດນິຣັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ໂຢຮັນ 3:16)

1. ທ່ານໄດ້ຍິນ ຫລືເຂົ້າໃຈ ໃນໂຢຮັນ 3:16 ຄັ້ງແຮກແລ້ວທ່ານໄດ້ເຮັດຫຍັງ?
2. ໃນໂຢຮັນ 3:16 ໄດ້ບອກຫຍັງແກ່ພວກເຮົາ?
3. ເຮັດແນວໃດພວກເຮົາຈຶ່ງຈະຮັກຄົນອື່ນ ໄດ້ເໝືອນດັ່ງພຣະແຈ້າຊົງຮັກ?

## 2. <u>ຄວາມຮັກຂອງພຣະເຈົ້າຢູ່ໃນຕົວທ່ານ:</u> (1 ໂຢຮັນ 3:16-20)

1) ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ 1 ໂຢຮັນ 3:16-20

- ພິຈາຣະນາເບິ່ງຄວາມຮັກທີ່ເສັຽສລະ. ແຕ່ເປັນຫຍັງບາງຄົນມີຄວາມຮັກທີ່ເສັຽສລະເພື່ອຕົນພຽງຄົນດຽວ ເປັນຫຍັງບໍ່ເສັຽສລະເພື່ອຄົນອື່ນແດ່. (ຖ້າອີງຕາມຫົວຂໍ້ທີ່ວ່າຄວາມຮັກຂອງພຣະເຈົ້າຊົງສະຖິດໃນທ່ານ) ແລ້ວພວກເຮົາຈະຄິດແນວໃດ?
- ໃຫ້ນັກຮຽນຄຳນຶງເຖິງການທີ່ ພໍ່ແມ່, ພໍ່ຕູ້ ແມ່ຍາຍ ຫລືຜູ້ໃຫຍ່ທົ່ວໄປທີ່ມີໃຈເສັຽສລະ ແລະຕ້ອງການໃຫ້ລູກຫລານມີໃນສິ່ງທີ່ເຂົາເຈົ້າບໍ່ມີ.
- ໃຫ້ນັກຮຽນແບ່ງປັນເຣື່ອງການເສັຽສລະຂອງພໍ່ ແມ່ ຫລືພໍ່ຕູ້ ແມ່ຍາຍຂອງເຂົາເຈົ້າທີ່ມີຕໍ່ເຂົາເຈົ້າສູ່ກັນຟັງ.
- ສົນທະນາກັນເຣື່ອງ ຄວາມສຳຄັນຂອງຄວາມຮັກຊຶ່ງບໍ່ແມ່ນແຕ່ ຮັກດ້ວຍຄວາມເວົ້າ ແລະປາກເທົ່ານັ້ນ ແຕ່ໃນການກະທຳ ແລະການເຊື່ອໄວ້ວາງໃຈດ້ວຍ. ທ້າທາຍໃຫ້ນັກຮຽນກະທຳຕາມຄວາມເວົ້າຂອງເຂົາເຈົ້າ ແລະສອນໃຫ້ ເຮັດດີຕໍ່ຄົນອື່ນດ້ວຍ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (1 ໂຢຮັນ 3:16-20)

1. ພວເຮົາຈະສະແດງອອກຢ່າງໃດວ່າຄວາມຮັກຂອງພຣະເຈົ້າຢູ່ໃນເຮົາ?
2. ຄວາມຮັກຂອງພຣະເຈົ້າຢູ່ໃນເຮົາເໝືອນຄວາມຮັກທີ່ພໍ່ແມ່ມີຕໍ່ລູກນັ້ນເປັນແນວໃດ?
3. ການເສັຽສລະຊີວິດເພື່ອຄົນອື່ນຂອງທ່ານມີຄວາມໝາຍແນວໃດ? ໃຫ້ຕົວຢ່າງມາເບິ່ງ.

### 3. ຄວາມຮັກຂອງພຣະເຈົ້າທຳລາຍຄວາມຢ້ານກົວ: (1 ໂຢຮັນ 4:15-18)

- ຂໍໃຫ້ນັກຮຽນອາສາສມັກອ່ານ 1 ໂຢຮັນ 4:15-18
- ໃຫ້ນັກຮຽນປະເມີນເບິ່ງຕົນເອງວ່າ: ເຂົາເຈົ້າຍອມຮັບວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ ຫລາຍປານໃດ? ຈັກເປີເຊັນ?
- ສເນີໃຫ້ນັກຮຽນແບ່ງປັນຕົວຢ່າງໃນທາງທີ່ເຂົາເຈົ້າໄດ້ຮັກຄົນອື່ນ ແລະຕໍ່ຄົນຕໍ່ ໆ ໄປ ຈົນເຖິງຄົນທີ່ຕ່າງວັທນະທັມກັບເຂົາເຈົ້າ.

ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: ( 1 ໂຢຮັນ 4:15-18

1. ການຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້ານັ້ນມີຄວາມສຳຄັນຢ່າງໃດແດ່?
2. ທ່ານຈະເຮັດແນວໃດເພື່ອສະແດງໃຫ້ເຫັນວ່າທ່ານໄດ້ເຊື່ອວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ?
3. ຄວາມຢ້ານກົວເປັນອຸປສັກໃນຄວາມສັມພັນກັບພຣະເຈົ້າຂອງທ່ານແນວໃດແດ່?

### 4. ຄວາມຮັກຂອງພຣະເຈົ້ານຳທ່ານໄປສູ່ຄວາມເຊື່ອຟັງ: (1 ໂຢຮັນ 5:2-5)

- ຂໍໃຫ້ນັກຮຽນອາສາສມັກອ່ານ 1 ໂຢຮັນ 5:2-5
- ເພື່ອຄວາມຊົງຈຳຂອງນັກຮຽນ ເຖິງການເຊື່ອຟັງບາງເທື່ອເຮົາກໍເຫັນເປັນທາງລົບໃນທາງສັງຄົມຂອງພວກເຮົາ.
- ຖາມ: ການເຊື່ອຟັງພຣະເຈົ້າເປັນມາຕຖານຂອງຄວາມໄວ້ວາງໃຈ ແລະຄວາມໂຄຣົບພຣະອົງຢ່າງໃດ?

ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: ( 1 ໂຢຮັນ 5:2-5)

1. ບັນດາຜູ້ທີ່ເຊື່ອຄວນເອົາຊະນະຕໍ່ໂລກດ້ວຍເຊື່ອວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າໄດ້ຢ່າງໃດ?
2. ການເຊື່ອຟັງພຣະເຈົ້າໄດ້ສະທ້ອນເຖິງຜູ້ທີ່ເຊື່ອວ່າເປັນຜູ້ທີ່ຮັກພຣະເຈົ້າຢ່າງໃດ?
3. ເຮັດແນວໃດຈຶ່ງຈະຢູ່ໃນເສຣີພາບໂດຍຜ່ານທາງການເຊື່ອຟັງພຣະເຈົ້າໄດ້?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ

- ພຣະເຈົ້າໄດ້ຊົງສຳແດງຄວາມຮັກຂອງພຣະອົງໃຫ້ແກ່ພວກເຮົາໂດຍຊົງປະທານພຣະບຸດຂອງພຣະອົງເພື່ອໃຫ້ພວກເຮົາໄດ້ຮັບຊີວິດອັນຕລອດໄປເປັນນິດ.
- ພຣະເຈົ້າມີພຣະປະສົງໃຫ້ໄພ່ພົນຂອງພຣະອົງຮັກຮັກຊຶ່ງກັນແລະກັນ ພິເສດແມ່ນໃຫ້ຮັກຜູ້ທີ່ສແວງຫາພຣະອົງ
- ເພາະວ່າທ່ານໄດ້ຮູ້ຈັກຄວາມຮັກຂອງພຣະເຈົ້າ ເພື່ອໃຫ້ທ່ານເປັນຄົນທີ່ອົດທົນ, ທ່ານສາມາດດຳຣົງຊີວິດຢ່າງໝັ້ນໃຈ ແລະແນ່ນອນໃຈໃນຄວາມຮັກທີ່ປາສະຈາກການຢ້ານກົວ.
- ບັນດາຜູ້ທີ່ເຊື່ອທັງຫລາຍຄວນສະແດງຄວາມຮັກຂອງເຂົາເຈົ້າໂດຍການເຊື່ອຟັງພຣະເຈົ້າ ແລະສະແດງຄວາມຮັກຂອງພຣະອົງໃຫ້ແກ່ຄົນອື່ນ ໆ ດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH